# ບົດຮຽນທີ 1
## <u>ແນ່ໃຈໃນຄວາມລອດພົ້ນ</u>

ພຣະປະສົງຂອງພຣະເຈົ້າແມ່ນຢາກໃຫ້ທ່ານຮູ້ແລະແນ່ໃຈວ່າທ່ານມີຊີວິດນິຣັນແລ້ວ. ແຕ່ຕ້ອງເຂົ້າໃຈວ່າການມີຊີວິດນິຣັນນັ້ນບໍ່ແມ່ນຄວາມຮູ້ສຶກບາງຄັ້ງຄາວເທົ່ານັ້ນແລະບໍ່ແມ່ນຈະພິສູດດ້ວຍຕາເປົ່າໄດ້, ແຕ່ແມ່ນອີງໃສ່ຄວາມຈິງໃນພຣະຄັມພີທີ່ເປັນຫລັກເປັນກົດເກນ ດັ່ງຕົວຢ່າງດັ່ງຕໍ່ລົງໄປນີ້;

**1. ມີຫລັກຖານຢັ້ງຢືນການມີຊີວິດນິຣັນໃນພຣະທັມຄັມພີ.**

ກ. <u>ໂຢຮັນ 3:16</u> *ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດ.*

ຂ. <u>ໂຢຮັນ 3:36</u> *ຜູ້ທີ່ວາງໃຈໃນພຣະບຸດກໍມີຊີວິດຕລອດໄປເປັນນິດ ຜູ້ທີ່ບໍ່ເຊື່ອຟັງພຣະບຸດກໍຈະບໍ່ໄດ້ເຫັນຊີວິດແຕ່ພຣະພິໂຣດຂອງພຣະເຈົ້າປົກຄຸມຢູ່ເທິງຜູ້ນັ້ນ.*

ຄ. <u>1 ໂຢຮັນ 5:11-13</u> *ນີ້ແຫລະ, ເປັນພຍານຫລັກຖານນັ້ນ ຄືວ່າພຣະເຈົ້າໄດ້ຊົງໂຜດປະທານຊີວິດອັນຕລອດໄປເປັນນິດໃຫ້ເຮົາທັງຫລາຍ ແລະຊີວິດນີ້ມີຢູ່ໃນພຣະບຸດຂອງພຣະອົງຜູ້ທີ່ມີພຣະບຸດກໍມີຊີວິດ ຜູ້ທີ່ບໍ່ມີພຣະບຸດຂອງພຣະເຈົ້າກໍບໍ່ມີຊີວິດ ຂໍ້ຄວາມເຫລົ່ານີ້ ເຮົາຂຽນມາເຖິງເຈົ້າທັງຫລາຍທີ່ເຊື່ອໃນພຣະນາມພຣະບຸດຂອງພຣະເຈົ້າ ເພື່ອເຈົ້າທັງຫລາຍຈະໄດ້ຮູ້ວ່າພວກເຈົ້າມີຊີວິດອັນຕລອດໄປເປັນນິດ.*

**2. ພຣະເຈົ້າໄດ້ສັນຍາກັບທ່ານໃນເຣື່ອງຄວາມພົ້ນ.**

ກ. <u>ໂຣມ 10:9</u> *ຄືວ່າຖ້າເຈົ້າຈະຮັບດ້ວຍປາກຂອງເຈົ້າວ່າ, "ພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ" ແລະເຊື່ອໃນຈິດໃຈວ່າ ພຣະເຈົ້າໄດ້ຊົງໂຜດບັນດານໃຫ້ພຣະອົງຊົງຄືນຂຶ້ນມາຈາກຕາຍແລ້ວເຈົ້າກໍຈະໄດ້ພົ້ນ*

ຂ. <u>ໂຢຮັນ 5:24</u> *ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ຖ້າຜູ້ໃດ.....................ແລະ...............................ໃນ ພຣະອົງຜູ້ຊົງໃຊ້ເຮົາມາ ຜູ້ນັ້ນກໍ........................ ແລະບໍ່ເຂົ້າໃນການ................................ ແຕ່ໄດ້ຜ່ານພົ້ນຈາກ.....................ໄປສູ່ຊີວິດແລ້ວ*

ຄ. <u>ລູກາ 23:43</u> *ຝ່າຍພຣະອົງຊົງຕອບວ່າ, "ເຮົາບອກທ່ານຕາມຈິງວ່າ ວັນນີ້ທ່ານຈະຢູ່ກັບເຮົາໃນທີ່..................."*

3. **ບໍ່ມີຜູ້ໃດບອກທ່ານວ່າທ່ານພົ້ນຫລືບໍ່ ເຣື່ອງນີ້ຂຶ້ນກັບພຣະເຈົ້າແລະທ່ານເອງ.**

**ກ. <u>1 ໂກຣິນໂທ 5:24</u>** *ພຣະເຈົ້າ...........................ພຣະອົງໄດ້ຊົງເອີ້ນພວກເຈົ້າໃຫ້ເຂົ້າສຳພັນສນິດກັບພຣະບຸດຂອງພຣະອົງ ຄືພຣະເຢຊູຄຣິດອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍ.*

**ຂ. <u>1ເທຊະໂລນີກ 5:24</u>**.......................*ຜູ້ຊົງເອີ້ນເອົາເຈົ້າທັງຫລາຍນັ້ນ................ພຣະອົງນັ້ນແຫລະ, ຈະຊົງດຳເນີນງານ.*

**ຄ. <u>ເຮັບເຣີ 10:23</u>** *ຈົ່ງຍຶດໝັ້ນໃນຄວາມຫວັງທີ່ພວກເຮົາປະກາດຕົວວ່າໄດ້ຮັບໄວ້ແລ້ວນັ້ນ ຢ່າໃຫ້ເຄື່ອນໄຫວ ເພາະວ່າພຣະອົງຜູ້ຊົງ......................ພຣະສັນຍານັ້ນກໍຊົງສັດຊື່.*

**ງ. <u>ໂຣມ 8:38-39</u>** *ເຫດວ່າເຮົາເຊື່ອຢ່າງໝັ້ນຄົງວ່າ ຄວາມຕາຍຫລືຊີວິດກໍດີ ເທວະດາຫລືຜູ້ປົກຄອງກໍດີ ສິ່ງທີ່ມີຢູ່ດຽວນີ້ຫລືສິ່ງຈະມີມາໃນພາຍໜ້າກໍດີ ຫລືຣິດເດດທັງຫລາຍຄວາມສູງ ຫລືຄວາມເລິກກໍດີ ຫລືສິ່ງອື່ນໃດທີ່ໄດ້ຊົງສ້າງແລ້ວນັ້ນກໍດີ ................................................ຂອງພຣະເຈົ້າ ຊຶ່ງມີຢູ່ໃນພຣະເຢຊູຄຣິດເຈົ້າຂອງເຮົາທັງຫລາຍນັ້ນ.*

4. **ຊົງປະທັບຕຣາໝາຍທ່ານໄວ້ໂດຍພຣະວິນຍານບໍຣິສຸດ.**





ເພື່ອເປັນຫລັກຄ້ຳປະກັນນັ້ນພຣະເຈົ້າໄດ້ຊົງໂຜດປະທານໂດຍພຣະວິນຍານບໍຣິສຸດມາຢູ່ກັບທ່ານ.

**ກ. <u>ເອເຟໂຊ 1:13-14</u>** *ໃນພຣະອົງນັ້ນທ່ານທັງຫລາຍກໍເຫມືອນກັນ ເມື່ອໄດ້ຍິນພຣະທັມອັນສັດຈິງ ຄືຂ່າວປະເສີດເຣື່ອງຄວາມພົ້ນຂອງພວກທ່ານ ແລະໄດ້ວາງໃຈໃນພຣະອົງ ກໍໄດ້ຖືກ.......................ໄວ້ດ້ວຍພຣະວິນຍານບໍຣິສຸດທີ່ຊົງສັນຍາໄວ້ນັ້ນເປັນ...................ຂອງການຮັບມໍຣະດົກຂອງພວກເຮົາ ຈົນກວ່າເຮົາຈະໄດ້ຮັບເປັນກັມມະສິດ ເປັນທີ່ຖວາຍສັຣເສີນແດ່ພຣະກຽດຕິຍົດຂອງພຣະອົງ*

# <u>ສລຸບບົດຮຽນ 1</u>

⇨ ອ່ານ 2 ໂກຣິນໂທ 5:17 ແລະເຕີມຊ່ອງວ່າງດັ່ງຕໍ່ໄປນີ້;

*ເຫດສັນນັ້ນຖ້າຜູ້ໃດຢູ່ໃນພຣະຄຣິດ ຜູ້ນັ້ນກໍເປັນ..............................................ຖານະເກົ່າເຫລົ່ານັ້ນ....................................ເບິ່ງແມ, ກາຍເປັນ............................................*

⇨ ຄຳພະຍານສ່ວນຕົວ, ນັບຕັ້ງແຕ່ມື້ທີ່ທ່ານມາເຊື່ອໃນພຣະເຢຊູຄຣິດ ຊີວິດຂອງທ່ານປ່ຽນແປງແນວໃດແດ່? ກະຣຸນາບັນທຶກລົງຊ່ອງວ່າງຂ້າງລຸ່ມ.

1..........................................................................................................................

2..........................................................................................................................

3..........................................................................................................................

ອີງຕາມບົດຮຽນນີ້, ຄວາມລອດພົ້ນຂອງທ່ານແມ່ນອີງໃສ່ອັນໃດແດ່;

1:.........................................................................................................................

2:.........................................................................................................................

3:.........................................................................................................................

4:.........................................................................................................................

## ຈົບບົດຮຽນທີ 1

# ບົດຮຽນທີ 2

## <u>ຕ້ອງກ້າເປີດເຜີຍຄວາມເຊື່ອ</u>

### 1. ພຣະເຢຊູມີພຣະປະສົງໃຫ້ຜູ້ທີ່ເຊື່ອໃນພຣະອົງກ້າສະແດງຕົນວ່າເປັນເຊື່ອແລ້ວ.

*ດັ່ງນັ້ນທຸກຄົນທີ່............................ຕໍ່ໜ້າມະນຸດ ຝ່າຍເຮົາ........................ຕໍ່ພຣະພັກພຣະບິດາຂອງເຮົາ ຜູ້ຊົງສະຖິດຢູ່ໃນສວັນເໝືອນກັນ ແຕ່ຜູ້ທີ່..............................ຕໍ່ໜ້າມະນຸດ............................ ຜູ້ນັ້ນຕໍ່ພຣະພັກພຣະບິດາຂອງເຮົາຜູ້ຊົງສະຖິດຢູ່ໃນສວັນເໝືອນກັນ* (ມັດທາຍ 10:32-33).



ພາບຂອງຊ່າງໄມ້ບໍ່ສາມາດຖອນຕາປູໄດ້ຫາກດ້ານປາຍຖືກຕີທັບໄວ້ແລ້ວ,
ການສະແດງອອກເຖິງຄວາມເຊື່ອໃນພຣະເຢຊູຈະບໍ່ຖືກຖອນອອກໄດ້
ຫາກມາໂບດໂດຍຄວາມເຊື່ອ.

ເກືອບວ່າທຸກໆໂບດຈະເປີດໂອກາດໃຫ້ຄົນຮັບເຊື່ອຫລັງຈາກການເທສນາ, ຫາກທ່ານຍັງບໍ່ເຄີຍ ອອກຮັບເຊື່ອເທື່ອທ່ານຄວນຈະອອກໄປຮັບເຊື່ອ ເພາະການຍອມຮັບພຣະເຢຊູຕໍ່ໜ້າພີ່ນ້ອງນັ້ນແມ່ນການສະແດງອອກການເຊື່ອຢ່າງເປີດເຜີຍ ແລະຫລັງຈາກຮັບເຊື່ອແລ້ວທ່ານຄວນຮັບບັບຕິສະມາ.



ນີ້ແມ່ນການບັບຕິສະມາຈຸ່ມລົງໃນນ້ຳ

2. **ບັບຕິສະມາແມ່ນການປະກາດການຖິ້ມໃຈເກົ່າເອົາໃຈໃຫມ່ຕໍ່ໜ້າມະຫາຊົນ.**

ພຣະເຢຊູໄດ້ສັ່ງຜູ້ເຊື່ອຖືຮັກສາຂໍ້ບັນຍັດເພື່ອເປັນການທົດສອບຄວາມເຊື່ອຂອງຕົນ

ອ່ານ 1 ໂຢຮັນ 2:3 ແລ້ວເຕີມຊ່ອງວ່າງຂ້າງລຸ່ມນີ້.

..............................................................................................................................................

..............................................................................................................................................

..............................................................................................................................................

3. **ບັບຕິສະມາເປັນຄຳສັ່ງຂອງພຣະເຢຊູ (ອ່ານມັດທາຍ 28:19-20).**

ການຮັບບັບຕິສມາເປັນຄຳສັ່ງຢ່າງເຄັ່ງຄັດ ຫາກເຮົາເປັນຄຣິສຕຽນ ກໍຈຳຕ້ອງຮັບບັບຕິສະມາເພື່ອກາຍເປັນຄຣິສຕຽນທີ່ເຊື່ອຟັງ. (ບາງກໍຣະນີອາດຍົກເວັ້ນ). ເຮົາຈະເຫັນພຣະເຢຊູເອງໄດ້ຮັບບັບຕິສະມາເພື່ອເປັນຕົວຢ່າງແກ່ເຮົາ. ອ່ານມັດທາຍ 3:13-17.

4. **ຕົວຢ່າງຄົນເຊື່ອໃໝ່ຮັບບັບຕິສະມາ (ອ່ານ ກິຈການ 2:37-38,47)**

ພຣະຄັມພີໄດ້ບອກຢ່າງແຈ່ມແຈ້ງວ່າທຸກຄົນທີ່ເຊື່ອໃນພຣະເຢຊູຈຳຕ້ອງຮັບບັບຕິສະມາ
ຕົວຢ່າງໃນກິຈການ 8:35-38. ຫລັງຈາກໄທເມືອງເອທີໂອເປັຽໄດ້ເຊື່ອແລ້ວ ກໍຮັບບັບຕິສະມາທັນທີ.

5. **ຮັບບັບຕິສະມາແມ່ນການສະແດງຄວາມຮັກຂອງທ່ານຕໍ່ພຣະເຢຊູ (ອ່ານໂຢຮັນ 14:21).**

ຂໍໃຫ້ຂຽນຄວາມຮູ້ສຶກຂອງທ່ານອີງຕາມພຣະທັມ ໂຢຮັນ 14:21

..............................................................................................................................................

..............................................................................................................................................

6. **ບັບຕິສະມາມີຄວາມໝາຍສອງຢ່າງຄື;**

1. ພຣະເຢຊູຍອມຕາຍເພື່ອຄວາມຜິດບາບຂອງທ່ານ, ແລະຄືນມາຈາກຕາຍອີກ (ອ່ານ 1 ໂກຣິນໂທ 15:3-4).
2. ທ່ານໄດ້ຕາຍຈາກຄວາມຜິດບາບ ແລະຮັບຊີວິດໃໝ່ໃນພຣະເຢຊູ (ອ່ານ ໂຣມ 6:3-4).

ພຣະຄັມພີໄດ້ສອນວ່າ ການບັບຕິສະມາທີ່ຖືກຕ້ອງນັ້ນຈຳຕ້ອງຈຸ່ມລົງໃນນ້ຳໝົດທັງຕົວ, ໂດຍສະເພາະການນອນຫງາຍໜ້ານັ້ນເປັນຮູບພາບຂອງຄົນຕາຍ ຄ້າຍກັບວ່າທ່ານໄດ້ຕາຍແລ້ວ ໃນນ້ຳບັບຕິສະມາ ແລະການລຸກຂຶ້ນມານັ້ນ ເປັນຮູບພາບຂອງຄົນທີ່ຟື້ນຈາກການນອນຫລັບ ຫລືຄືນຈາກຄວາມຕາຍແລ້ວຮັບຊີວິດໃໝ່ໃນພຣະເຢຊູຄຣິດ. (ມັດທາຍ 3:13-17; ໂຢຮັນ 1:13-16).

## ບົດສລຸບ

### ພຣະຄັມພີຊີ້ແຈງວ່າການບັບຕິສະມາກ່ຽວຂ້ອງກັບ 4 ຢ່າງຄື;

1. ຜູ້ເຊື່ອທີ່ຖືກຕ້ອງນັ້ນຕ້ອງສະແດງຕົນ (ປະຕິບັດຕົນ) ເປັນຜູ້ເຊື່ອແທ້.
2. ຜູ້ເຊື່ອທີ່ແທ້ນັ້ນຕ້ອງເປັນຜູ້ເຊື່ອຟັງຄຳສັ່ງ, ທັງເປັນປະກາດຄວາມເຊື່ອຂອງຕົນ.
3. ບາດກ້າວທີ່ຖືກຕ້ອງນັ້ນ ຕ້ອງບັບຕິສະມາໂດຍຈຸ່ມລົງໝົດທັງຕົວ.
4. ສິດທິທີ່ຖືກຕ້ອງນັ້ນຕ້ອງຮັບບັບຕິສະມາໃນໂບດທ້ອງຖິ່ນ (ກິຈການ 2:41-47).

**ຈົບບົດຮຽນທີ 2**

# ບົດຮຽນທີ 3

## ເວົ້າເລື່ອງພຣະເຢຊູໃຫ້ຜູ້ອື່ນຟັງ

ຫລາຍຄົນມີຄວາມພູມໃຈເມື່ອມີຂ່າວດີເກີດຂຶ້ນໃນຄອບຄົວເຊັ່ນງານແຕ່ງງານ, ການໄດ້ລູກໃຫມ່ ແລະຂ່າວ ດີອື່ນໆ ເຮົາມັກຈະຟ້າວໄປບອກຄົນອື່ນໃຫ້ຮູ້ຂ່າວດີນັ້ນດ້ວຍຄວາມຕື່ນເຕັ້ນແລະດີໃຈ, ການບັງເກີດໃໝ່ຝ່າຍຈິດວິນຍານເປັນຂ່າວທີ່ໜ້າຕື່ນເຕັ້ນທີ່ສຸດ ເມື່ອຕື່ນເຕັ້ນເຮົາກໍອົດເວົ້າບໍ່ໄດ້ແມ່ນບໍ່?.

ການເປັນຄຣິສຕຽນເປັນຂ່າວທີ່ຕື່ນເຕັ້ນເພາະວ່າຊີວິດໄດ້ຮັບການປ່ຽນແປງຄືປ່ຽນຈາກຊີວິດທັມມະດາມາເປັນຊີວິດນິຣັນໃນຟ້າສວັນ. ດັ່ງນັ້ນການບອກເລື່ອງຊີວິດທີ່ຖືກປ່ຽນແປງນັ້ນເຮົາທຸກຄົນຈະຕ້ອງເວົ້າໃຫ້ຜູ້ອື່ນຟັງໂດຍບໍ່ມີຄວາມລະອາຍ. ພຣະເຈົ້າມີພຣະປະສົງໃຫ້ທ່ານແນະນຳຜູ້ອື່ນໃຫ້ມາຫາພຣະອົງ ເພື່ອຊີວິດຂອງເຂົາຈະຖືກປ່ຽນແປງຄືທ່ານ.

ຕົວຢ່າງ, ເມື່ອທ່ານອັນເດອາພົບພຣະເຢຊູແລ້ວ ກໍໄປຫາ.......................................ອ້າຍຂອງຕົນ ໃຫ້ມາຫາພຣະເຢຊູ (ອ່ານ ໂຢຮັນ 1:40-41).

ເມື່ອເຮົາບອກຜູ້ອື່ນວ່າພຣະເຢຊູປ່ຽນຊີວິດຂອງເຮົາໆກໍເປັນພະຍານຝ່າຍພຣະເຢຊູແລ້ວ. ພຣະເຢຊູເອງໄດ້ສັ່ງພວກສາວົກຂອງພຣະອົງໃນພຣະທັມ (ມັດທາຍ 28:19-20).

ໃນການເປັນພະຍານນັ້ນມີສອງຢ່າງທີ່ທ່ານຄວນຈະເວົ້າຄື:

**1.** ຄຳພະຍານສ່ວນຕົວ (ເຫດການທີ່ເກີດຂຶ້ນໃນຊີວິດ ຮວມທັງການດຳຣົງຊີວິດຂອງທ່ານ)

**2.** ພຣະຄັມພີ. (ການເວົ້າເລື່ອງພຣະຄັມພີເປັນເລື່ອງທີ່ເຂົ້າໃຈຍາກກວ່າເລື່ອງຊີວິດຂອງທ່ານ).

## 1. ຂັ້ນຕອນໃນການເປັນພະຍານສ່ວນຕົວມີດັ່ງນີ້;

**1.** ຊີວິດກ່ອນໜ້າຮັບເຊື່ອ.

**2.** ທ່ານມາເຊື່ອໄດ້ແນວໃດ?

**3.** ມາເຊື່ອແລ້ວມີຄວາມຮູ້ສຶກແນວໃດ, ການຢູ່ກິນດີຂຶ້ນແນວໃດແນວໃດ?

**4.** ຊັກຊວນຜູ້ອື່ນເຊື່ອແນວໃດ?

ເພື່ອເປັນຕົວຢ່າງໃນການຂຽນຄຳພະຍານໃຫ້ອ່ານກິຈການ 22:3-21. ແລ້ວຂຽນລົງຊ່ອງວ່າງ ຕໍ່ໄປນີ້:

**1.** ຊີວິດກ່ອນໜ້າຮັບເຊື່ອ.

...................................................................................................................................................

-----------------------------------------------------------------------------------------------------------------------------------

-----------------------------------------------------------------------------------------------------------------------------------

----------------------------------------------------------------------

**2.** ທ່ານມາເຊື່ອໄດ້ແນວໃດ**?**

-----------------------------------------------------------------------------------------------------------------------------------

-----------------------------------------------------------------------------------------------------------------------------------

-----------------------------------------------------------------------------------------------------------------------------------

----------------------------------------------------------------------

**3.** ມາເຊື່ອແລ້ວມີຄວາມຮູ້ສຶກແນວໃດ**,** ການຢູ່ກິນດີຂຶ້ນແນວໃດແນວໃດ**?**

.....................................................................................

-----------------------------------------------------------------------------------------------------------------------------------

-----------------------------------------------------------------------------------------------------------------------------------

----------------------------------------------------------------------

**4.** ຊັກຊວນຜູ້ອື່ນເຊື່ອແນວໃດ**?**

-----------------------------------------------------------------------------------------------------------------------------------

-----------------------------------------------------------------------------------------------------------------------------------

-----------------------------------------------------------------------------------------------------------------------------------

----------------------------------------------------------------------

## 2. **ພຣະຄັມພີເປັນພາກສ່ວນທີສອງຂອງການເປັນພະຍານ.**

ໃນຂໍ້ພຣະຄັມພີຕໍ່ໄປນີ້ສາມາດຊ່ອຍທ່ານໃນການເວົ້າໃຫ້ຜູ້ບໍ່ເຊື່ອໄດ້ເຂົ້າໃຈເຣື່ອງຊີວິດນິຣັນ. ກະຣຸນນາໃຊ້ເວລາອ່ານໃຫ້ເຂົ້າໃຈເສັຽກ່ອນໆຈະເວົ້າໃຫ້ຜູ້ອື່ນຟັງ, ຫາກໝາຍພຣະຄັມພີໄວ້ຈະເປັນການດີ.

ໂຣມ 15:13

ໂຣມ 1:16

ໂຣມ 2:4

ໂຣມ 3:23

ໂຣມ 5:8

ໂຣມ 6:23

ໂຣມ 10:9,13

ມີໃບປິວທີ່ມີຊື່ວ່າ ເສັ້ນທາງໂຣມັນ ເປັນໃບປິວທີ່ເຕັມໄປດ້ວຍຂໍ່ພຣະຄັມພີທີ່ສາມາດຊ່ອຍທ່ານໃກການເປັນພະຍານ. ທ່ານຈະຫາຊື້ໄດ້ຕາມຮ້ານຄຣິສຕຽນທົ່ວໄປ.

## ບົດສລຸບ

- ດ້ວຍເຫດໃດທ່ານຈຶ່ງເວົ້າເຣື່ອງພຣະເຢຊູໃຫ້ຜູ້ອື່ນຟັງ?

  ..........................................................................................................................................

  ------------------------------------------------------------------------------------------------------------------------------------------

  ------------------------------------------------------------------------------------------------------------------------------------------

- ທ່ານຄຶດວ່າຜູ້ໃດທີ່ຕ້ອງການພຣະເຢຊູໃນເວລານີ້?

  ..........................................................................................................................................

  ------------------------------------------------------------------------------------------------------------------------------------------

  ------------------------------------------------------------------------------------------------------------------------------------------

- ທ່ານຈະເວົ້າຄຳພະຍານສ່ວນຕົວໃຫ້ໃຜຟັງໃນອາທິດນີ້?

  ..........................................................................................................................................

  ------------------------------------------------------------------------------------------------------------------------------------------

  ------------------------------------------------------------------------------------------------------------------------------------------

**ຈົບບົດຮຽນທີ 3**

# <u>ບົດຮຽນທີ 4</u>
## ວິທີສຶກສາພຣະທັມດ້ວຍຕົນເອງ

ພຣະເຈົ້າຢາກມີຄວາມສັມພັນໃກ້ຊິດກັບທານເປັນທາງສ່ວນຕົວ ເພາະວ່າທ່ານບໍ່ແມ່ນລູກທີ່ຖືກປະລະເລີຍ ແຕ່ຢ່າງໃດ ທ່ານສາມາດມີຄວາມສັມພັນໃກ້ຊິດກັບພຣະເຈົ້າໂດຍການຮຽນພຣະທັມຂອງພຣະອົງ, ໃນການຮຽນນີ້ເອງຈະເຮັດໃຫ້ທ່ານຮູ້ສຶກວ່າພຣອົງຊົງຢູ່ໃກ້.

**1.** ຊົງມີພຣະປະສົງໂດຍ**ສະເພາະ** (ອ່ານ **2**ຕີໂມທຽວ 3:16).ພຣະທັມທຸກຕອນໄດ້ຮັບການຊົງບັນດານໃຈພຣະເຈົ້າ ແລະເປັນປໂຍດໃນການ............................ການ..........................................ການ.........................., ແລະການ
.........................................................

- ພຣະເຈົ້າສຳແດງຄວາມຮັກຂອງພຣະອົງຢ່າງໃດແດ່ນັ້ນຂໍໃຫ້ອ່ານແລະຊຽນຈາກຂໍ້ພຣະຄັມພີນີ້.
  ໂຢຮັນ 3:16

  ........................................................................................................................................................

  ........................................................................................................................................................

  ໂຣມ 5:8

  ........................................................................................................................................................

  ........................................................................................................................................................

- ພຣະທັມຂອງພຣເຈົ້າໄດ້ເປັນແສງສວ່າງໃຫ້ເຮົາເຫັນຄວາມບາບຈາກຂໍ້ພຣະຄັມພີນີ້.
  ເອເຟໂຊ 4:26-3

  ........................................................................................................................................................

  ........................................................................................................................................................

  ........................................................................................................................................................

**1** ພຣະທັມຂອງພຣະເຈົ້າບໍ່ແມ່ນແຕ່ຈະນຳທາງເຮົາເທົ່ານັ້ນ ພຣະຄັມພີຍັງຊ່ອຍເຮົາແກ້ໄຂຄວາມຜິດອີກ. ໃນເພງສັຣເສີນ 119 ເປັນເຄື່ອງນຳທາງຊີວິດ ແລະຊ່ອຍແປງຫົນທາງຊີວິດ ເຊັ່ນໃນຂໍ້ 9 *ຊາຍໜຸ່ມຈະຮັກສາທາງຂອງຕົນໃຫ້*

*ບໍຣິສຸດໄດ້ຢ່າງໃດ ໂດຍລະມັດລະວັງຕາມພຣະວັຈນະຂອງພຣະອົງ.* ຂຽນທາງຈະຮັກສາໃຫ້ບໍຣິສຸດລົງຊ່ອງວ່າງ

..............................................................................................................................................

..............................................................................................................................

ເມື່ອພຣະທັມພຣະເຈົ້າເຂົ້າໃນໃຈແລ້ວ ຄວາມຜິດພາດຕ່າງໆກໍຈະຖືກປ່ຽນແປງໂດຍພຣະທັມນັ້ນ.

- ພຣະທັມຂອງພຣະເຈົ້າເປັນເຂັມຊີ້ທິດໃນການເດີນທາງແຫ່ງຊີວິດ. ການຮຽນພຣະຄັມພີເປັນຄືອາຫານທີ່ຫຼໍ່ລ້ຽງຈິດວິນຍານ, ເມື່ອຮ່າງກາຍຕ້ອງການອາຫານສັນໃດວິນຍານຈິດກໍຕ້ອງການອາຫານສັນນັ້ນ ແຕ່ອາຫານຂອງຈິດວິນຍານນັ້ນແມ່ນພຣະທັມຂອງພຣະເຈົ້າ. ຜູ້ທໍານວາຍ ຜູ້ນຶ່ງຊື່ ເຢເຣມີອາ ໄດ້ບັນທຶກໃນພຣະທັມ ເຢເຣມີອາ 15:16 "*ເມື່ອພົບພຣະວັຈນະຂອງພຣະອົງແລ້ວ ຂ້າພຣະອົງກໍກິນເສັຽ ພຣະວັຈນະຂອງພຣະອົງເປັນຄວາມຊື່ນບານແກ່ຂ້າພຣະອົງ ແລະເປັນຄວາມປິຕິຍິນດີແຫ່ງຈິດໃຈຂອງຂ້າພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ພຣະເຈົ້າຈອມໂຍທາ ເພາະວ່າເຂົາເອີ້ນຂ້າພຣະອົງຕາມພຣະນາມຂອງພຣະອົງ*"

**2.** ຄໍາປຽບທຽບ, ຫາກທ່ານ ຈັບເອົາສິ່ງໃດສິ່ງນຶ່ງພຽງແຕ່ນິ້ວດຽວຫລືສອງນິ້ວເທົ່ານັ້ນ ສິ່ງນັ້ນອາດຕົກລົ່ນໄປງ່າຍດາຍ. ການຮຽນພຣະຄັມພີພຽງເລັກນ້ອຍກໍອາດບໍ່ພຽງພໍ ດັ່ງນັ້ນຈຶ່ງຂໍແນະນໍາໃຫ້ມີທັງຟັງ, ອ່ານ, ສຶກສາ, ພິຈາຣະນາຄົ້ນຄວ້າ, ທ່ອງຈໍາ, ແລະຕຶກຕອງ.

**1.** <u>ການຟັງ</u> ໃຫ້ອ່ານແລະຂຽນ ໂຣມ 10:17 ລົງຊ່ອງວ່າງ

..............................................................................................................................................

..............................................................................................................................

ເມື່ອຟັງອາຈານຂອງທ່ານເທສນາແລ້ວຈົດຂໍ້ຄວາມສໍາຄັນໄວ້ເທົ່າທີ່ທ່ານປະທັບໃຈ.

**2.** <u>ການອ່ານ</u> ໃຫ້ອ່ານແລະຂຽນ **1**ຕີໂມທຽວ 4:13 ລົງຊ່ອງວ່າງ

..............................................................................................................................................

..............................................................................................................................

ຕັ້ງເປົ້າຫມາຍວ່າຈະອ່ານພຣະທັມຂອງພຣະເຈົ້າມື້ນຶ່ງຫລາຍປານໃດ. ຕົວຢ່າງມື້ລະບົດຈາກພຣະທັມໂຢຮັນ.

**3.** ການສຶກສາ    ໃຫ້ອ່ານແລະຂຽນ 2 ຕີໂມທຽວ 2:15 ລົງຊ່ອງວ່າງ

...........................................................................................................................................

...........................................................................................................................

ໃນຂະນະທີ່ສຶກສາ ຄວນຖາມຄໍາຖາມດັ່ງນີ້;

- ພຣະທັມເວົ້າຫຍັງ?
- ຈະເຊື່ອຟັງແນວໃດ?
- ຈະເຮັດຕາມແນວໃດ?
- ຈະສາຣະພາບຫຍັງແດ່?

ແຕ່ຫາກທ່ານບໍ່ເຄີຍສຶກສາດັ່ງທີ່ກ່າວມາແລ້ວທ່ານຄວນຈະປຶກສາກັບສິດຍາພິບານ ຫລືອາຈານຂອງທ່ານເພື່ອເພິ່ນຈະແນະນໍາທ່ານເພີ້ມ.

**4.** ການທ່ອງຈໍາ   ໃຫ້ອ່ານແລະຂຽນ ເພງສັຣເສີນ 119:11 ລົງຊ່ອງວ່າງ

...........................................................................................................................

...........................................................................................................................

ການທ່ອງຈໍາຂໍ້ພຣະຄັມພີຈະຊ່ອຍທ່ານໃນການເວົ້າເຣື່ອງພຣະເຈົ້າໃຫ້ຜູ້ອື່ນຟັງ ແລະການທ່ອງຈໍາຍັງສາມາດຊ່ອຍທ່ານຊະນະຕໍ່ຄວາມຜິດບາບໄດ້ອີກ. ຄວນສແວງຫາທ່ອງຈໍາອາທິດລະຂໍ້ກໍຍັງດີ.

**5.** ການຕຶກຕອງ   ໃຫ້ອ່ານແລະຂຽນ ໂຢຊວຍ 1:8 ລົງຊ່ອງວ່າງ

...........................................................................................................................................

...........................................................................................................................

ການຕຶກຕອງແມ່ນຄ້າຍຄືການຍ່ອຍອາຫານ ເພາະເປັນການວິເຄາະແລ້ວວິເຄາະອີກ. ຕຶກຕອງ ພຣະທັມໃນກາງວັນຈະຊ່ອຍທ່ານຂັບຣິຖດີ, ບໍ່ເມື່ອຍຈາກການງານ, ເຮັດຫຍັງກະບໍ່ເມື່ອຍງ່າຍອີກ.

## <u>ສລຸບບົດຮຽນທີ 4</u>

ປໂຍດສີ່ຢ່າງທີ່ກ່າວມາແລ້ວໃນ 2 ຕີໂມທຽວ 3:16 ມີຫຍັງແດ່?

1. ພຣະທັມຂອງພຣະເຈົ້າເປັນປໂຍດ

..........................................................................................................................................

2. ພຣະທັມຂອງພຣະເຈົ້າເປັນປໂຍດ

..........................................................................................................................................

3. ພຣະທັມຂອງພຣະເຈົ້າເປັນປໂຫດ

..........................................................................................................................................

4. ພຣະທັມຂອງພຣະເຈົ້າເປັນປໂຍດ

..........................................................................................................................................

5 ຢ່າງທີ່ເອົານິ້ວມືມາປຽບທຽບໃນການຮຽນພຣະຄັມພີນັ້ນມີຫຍັງແດ່?

1............................................................2..........................................................................

3............................................................4..........................................................................

5.............................................................................................................................................

ເວລາໃດເປັນເວລາທີ່ດີຂອງທ່ານຈະຕ້ອງອ່ານພຣະຄັມພີປະຈຳວັນ ?

-----------------------------------------------------------------------------

*2* ກ່ອນຈະອ່ານຄວນອ້ອນວອນຂໍການຊົງນຳ, ຕົວຢ່າງບົດເພງສັຣເສີນ 119: 18 *ຂໍເປີດຕາຂ້າ ພຣະອົງ ເພື່ອຂ້າ ພຣະອົງຈະເຫັນສິ່ງມະຫັສຈັນຈາກພຣະທັມຂອງພຣະອົງ.*

### ຈົບບົດຮຽນທີ 4

# <u>ບົດຮຽນທີ 5</u>
## ການອ້ອນວອນອະທິຖານ

ການອ້ອນວອນອະທິຖານແມ່ນການໂອ້ລົມກັບພຣະເຈົ້າຕາມອັດທະຍາສັຍຂອງເຮົາ ຫລືເວົ້າໄດ້ວ່າເວົ້າກັບພຣະເຈົ້າຕາມໃຈນຶກຄຶດຂອງເຮົາໂດຍບໍ່ຈຳເປັນຈະຕ້ອງທ່ອງຈຳເວົ້າລົ້ມຄວາມເກົ່າ ພຽງແຕ່ຊອກຫາຄຳເວົ້າ ອັນສຸພາບອ່ອນນ້ອມແລ້ວເວົ້າຈາກຫົວໃຈສ່ວນເລິກຂອງເຮົາເທົ່ານັ້ນພຣະເຈົ້າກໍຈະຟັງເຮົາ.

*"ຖ້າເຈົ້າສແວງຫາພຣະອົງເຈົ້າຈະພົບພຣະອົງ ແຕ່ຖ້າເຈົ້າປະຖິ້ມພຣະອົງ ພຣະອົງຈະຊົງແກ່ວງເຈົ້າອອກໄປເສັຽເປັນນິດ"* (1 ຂ່າວຄາວ 28:9).

- ພຣະເຢຊູຊົງສອນວິທີອ້ອນວອນ (ມັດທາຍ 6:7-13).

  ..........................................................................................................................................

- ພຣະເຢຊູຊົງສອນໃຫ້ໝັ່ນອ້ອນວອນ (ລູກາ 18:1-8).

  ..........................................................................................................................................

- ພຣະເຢຊູຊົງສອນບ່ອນອ້ອນວອນສ່ວນຕົວ (ມັດທາຍ 6:6)

  ..........................................................................................................................................

- ໃຫ້ເຮົາອ້ອນວອນເປັນປະຈຳ (1ເທຊະໂລນິກ 5:17).

  ແບບແຜນການກາກອະທິຖານ ເພື່ອທ່ານຈະເປັນຜູ້ອ້ອນວອນທີ່ດີລຽງຕາມພາສາອັງກິດ

  **A. adoration** ສັຣເສີນດ້ວຍການຍ້ອງຍໍ
  **C. confession** ຄຳສາຣະພາບ
  **T. thanksgiving** ການຮູ້ຈັກບຸນຄຸນ (ຂອບພຣະຄຸນ)
  **S. submission** ຍອມຈຳນົນໃນພຣະນາມ (ທູນຂໍໃນພຣະນາມ)

1. **Adoration** ສັຣເສີນເພາະວ່າພຣະອົງຊົງເປັນພຣະເຈົ້າ. ອ່ານພຣະທັມ ແລະເຕີມຊ່ອງວ່າງດັ່ງຕໍ່ໄປນີ້.
   ເພງສັຣເສີນ 145:3

..........................................................................................................................................

..........................................................................................................................................................................

ເພງສັຣເສີນ 147:1, 5

..........................................................................................................................................................................

..........................................................................................................................................................................

ອ່ານ ເພງສັຣເສີ 100 ຫລື 150 ແລ້ວຈະຊ່ອຍທ່ານໃນການອ້ອນວອນພຣະເຈົ້າ

2. **Confession** ການສາຣະພາບຄວາມຜິດບາບຂອງເຮົາຕໍ່ພຣະເຈົ້າ ແລ້ວທ່ານຈະໄດ້ຮັບການຍົກໂທດ, ທ່ານໄດ້ຮັບຄວາມລອດພົ້ນຈາກບາບຕ່າງໆນັ້ນແມ່ນຍ້ອນທ່ານໄດ້ສາຣະພາບນັ້ນເອງ ແຕ່ຫາກເຮົາບໍ່ສາຣະພາບບາບ ກໍເທົ່າກັບວ່າເຮົາໄດ້ສ້າງກຳແພງລ້ອມບໍ່ໃຫ້ເຮົາເຂົ້າໃກ້ຊິດກັບພຣະເຈົ້າໄດ້. ໃນເພງສັຣເສີນ 66:18 *"ຖ້າຂ້າພະ**ເຈົ້າ**ໄດ້ຈົ່ມຄວາມຊົ່ວໄວ້ໃນໃຈຂ້າພະ**ເຈົ້າ** ອົງພຣະຜູ້ເປັນ**ເຈົ້າ**ຄົງບໍ່ຊົງສະດັບຟັງ"*

ໃຫ້ເຮົາຮຽນຄຳສາຣະພາບຈາກບຸດຫລົງຫາຍ ໃນພຣະທັມ ລູກາ 15:17-20

ຄຳສາຣະພາບຂອງບຸດຫລົງຫາຍ

..........................................................................................................................................................................

..........................................................................................................................................................................

..........................................................................................................................................................................

ຄຳສາຣະພາບຂອງທ່ານ

..........................................................................................................................................................................

..........................................................................................................................................................................

..........................................................................................................................................................................

3. ການຂອບພຣະຄຸນທີ່ພຣະເຈົ້າໄດ້ເຮັດໃນຊີວິດຂອງທ່ານ ອ່ານ 1ເທຊະໂລນິ 5:18

..........................................................................................................................................................................

ບັນທຶກການຂອງພຣະຄຸນຕ່າງໆດັ່ງນີ້;
ພຣະຄຸນຝ່າຍຈິດວິນຍານ

......................................................................................................................................................

ພຣະຄຸນດ້ານໝູ່ເພື່ອນ

......................................................................................................................................................

ພຣະຄຸນດ້ານສຸຂພາບ

......................................................................................................................................................

ພຣະຄຸນດ້ານສິ່ງຂອງຕ່າງໆ

.....................................................................................................................................................

4. ລົງທ້າຍດ້ວຍພຣະນາມແຫ່ງພຣະເຢຊູ ແປວ່າທ່ານໄດ້ອ້ອນວອນໃນພຣະນາມພຣະອົງແລ້ວ.

## <u>ສລຸບບົດຮຽນທີ 5</u>

ອີງຕາມຄວາມເຂົ້າໃຈຂອງທ່ານເຢຊູຊົງສອນວິທີອ້ອນວອນມີຫຍັງແດ່? (ມັດທາຍ 6:7-13)

......................................................................................................................................................

......................................................................................................................................................

......................................................................................................................................................

ໃນຄໍາອຸປະມາຂອງພຣະເຢຊູຊົງສອນໃຫ້ໝັ່ນອ້ອນວອນມີຫຍັງແດ່? (ລູກາ 18:1-8)

......................................................................................................................................................

......................................................................................................................................................

.....................................................................................................................................................

ພຣະເຢຊູຊົງສອນບ່ອນອ້ອນວອນສ່ວນຕົວແນວໃດ? (ມັດທາຍ 6:6)

......................................................................................................................................................

.....................................................................................................................................................

ບົດຝຶກຫັດການອ້ອນວອນ **ACTS**

**A. adoration** ສັຣເສີນດ້ວຍການຍ້ອງຍໍ

.................................................................................................................................................................................

**C. confession** ຄໍາສາຣະພາບ

.................................................................................................................................................................................

**T. thanksgiving** ການຮູ້ຈັກບຸນຄຸນ (ຂອບພຣະຄຸນ)

.................................................................................................................................................................................

**S. submission** ຍອມຈໍານົນໃນພຣະນາມ (ທູນຂໍໃນພຣະນາມ)

.................................................................................................................................................................................

**ຈົບບົດຮຽນທີ 5**